ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ 659/ຈຂ.ອປ

ອັດຕະປື, ວັນທີ 11 ກໍລະກົດ 2016

# ຄຳສັ່ງ

**ເຖິງ:** ບັນດາພະແນກການ, ສຳນັກງານ, ອົງການ, ຫ້າງຮ້ານ, ບໍລິສັດທັງພາກລັດ-ເອກະຊົນ, ຄົນຕ່າງດ້າວຊາວຕ່າງປະເທດຕະຫຼອດຮອດພໍ່ແມ່ປະຊາຊົນ ທີ່ດຳລົງຊີວິດຢູ່ແຂວງອັດຕະປື.

**ເລື່ອງ:** ການນຳໃຊ້ລົດ, ນຳໃຊ້ຖະໜົນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

- ອີງໃສ່ ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບເລກທີ 24/ສພຊ ລົງວັນທີ12 ທັນວາ 2012.
- ອີງໃສ່ ກົດໝາຍວ່າດ້ວຍຈະລາຈອນທາງບົກສະບັບເລກທີ 23/ສພຊ ລົງວັນທີ12 ທັນວາ 2012.
- ອີງໃສ່ ກົດລະບຽບການສັນຈອນຕາມທ້ອງຖະໜົນຫຼວງສະບັບເລກທີ 107 ລົງວັນທີ26 ຕຸລາ 1987.
- ອີງໃສ່ ຄຳສັ່ງຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບສະບັບເລກທີ 829/ປກສ, ລົງວັນທີ 21 ມັງກອນ 2016.
- ອີງໃສ່ ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນກ່ຽວກັບການນຳໃຊ້ລົດ, ໃຊ້ຖະໜົນຢູ່ພາຍໃນແຂວງອັດຕະປືຂອງພວກເຮົາ.

ໃນໄລຍະທີ່ຜ່ານມາ ຄະນະນຳຂອງແຂວງກໍ່ໄດ້ເອົາໃຈໃສ່ຊຸກຍູ້, ຊີ້ນຳບັນດາເລົ່າລົບວິຊາສະເພາະຢ່າງຕັ້ງໜ້າແລະເປັນປະຈຳ ເພື່ອແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນສັງຄົມ, ເຊິ່ງສາມາດແກ້ໄຂໄດ້ດີພໍສົມຄວນ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພທາງດ້ານການສັນຈອນ, ເຖິງວ່າຜ່ານມາສາມາດແກ້ໄຂໄດ້ຫຼາຍບັນຫາແລ້ວກໍ່ຕາມ ແຕ່ຍັງມີບັນດາປະກົດການຫຍໍ້ທໍ້ຈຳນວນໜຶ່ງ ທີ່ຈຳເປັນຕ້ອງໄດ້ສືບຕໍ່ເອົາໃຈໃສ່ສະກັດກັ້ນ ແລະແກ້ໄຂ ໂດຍສະເພາະແມ່ນການນຳໃຊ້ລົດບໍ່ຂຶ້ນທະບຽນ, ລົດບໍ່ຕິດປ້າຍ, ນຳໃຊ້ລົດປ້າຍແຕກ, ປ້າຍຫັກ, ປ້າຍຕົວເລກລົບ, ຕິດປ້າຍປອມ, ດັດແປງສະພາບເຕັກນິກຂອງລົດ ເພື່ອເຄື່ອນໄຫວກໍ່ອາດສະຍາກຳ, ຂົນສົ່ງເຄື່ອງຂອງທີ່ຜິດກົດໝາຍ ແລະ ອື່ນໆ; ການຈອດລົດຊະຊາຍ, ຈອດລົດບ່ອນປ້າຍຫ້າມຈອດ, ຈອດລົດໃກ້ທາງແຍກ ບ່ອນທີ່ມີເຄື່ອງໝາຍຫ້າມຈອດ, ຈອດລົດເທິງຟຸດບາດບ່ອນທາງຄົນຍ່າງ, ຂັບຂີ່ລົດໄວໃຊ້ສຽງດັງ, ຂີ່ລົດເປັນຟົງ, ເປັນແພສ້າງຄວາມລົບກວນລຳຄານໃຫ້ແກ່ສັງຄົມ, ຂັບຂີ່ລົດບໍ່ມີໃບອະນຸຍາດຂັບຂີ່, ອາຍຸບໍ່ເຖິງກະສຽນແລ້ວຂັບຂີ່, ເຊິ່ງເປັນສາເຫດເຮັດໃຫ້ອຸບັດຕິເຫດເກີດຂຶ້ນຕາມທ້ອງຖະໜົນຫຼວງ - ສ້າງຜົນເສຍຫາຍຕໍ່ຊີວິດ, ຊັບສິນທາງພັກລັດ, ລວມໝູ່ ແລະບຸກຄົນ ເຊິ່ງເປັນການສ້າງຜົນກະທົບໂດຍກົງ ຕໍ່ການສາງສາພັດທະນາຄອບຄົວກໍ່ຄືປະເທດຊາດໃຫ້ເຕີບໃຫຍ່ເຂັ້ມແຂງ.

ສະນັ້ນ, ເພື່ອເປັນການສະກັດກັ້ນ ແລະ ແກ້ໄຂໄດ້ຕໍ່ກັບບັນດາປະກົດການຫຍໍ້ທໍ້ດັ່ງກ່າວ ເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບ, ມີຄວາມປອດໄພທາງດ້ານການສັນຈອນເຮັດໃຫ້ການນຳໃຊ້ລົດນຳໃຊ້ຖະໜົນຖືກຕ້ອງຕາມລະບຽບກົດໝາຍ.

**ເຈົ້າແຂວງອອກຄໍາສັ່ງ:**

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທຸກພາກສ່ວນທີ່ມີພະຫານະຮັບໃຊ້ເປັນຕົ້ນແມ່ນລົດຈັກ, ລົດໃຫຍ່ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນທີ່ຍັງບໍ່ທັນໄດ້ຕິດປ້າຍ ໃຫ້ຮີບຮ້ອນນໍາເອົາພາຫະນະຂອງຕົນໄປຂຶ້ນທະບຽນ ຕິດປ້າຍ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

2. ການນໍາໃຊ້ລົດປ້າຍເກົ່າ, ປ້າຍແຕກ, ປ້າຍຫັກ, ປ້າຍຕົວເລກບໍ່ແຈ້ງ ( ເລກລຶບ )ໃຫ້ໄປສະເໜີຕໍ່ເຈົ້າໜ້າທີ່ຈະລາຈອນແຂວງເພື່ອປະກອບໃຫ້ຖືກຕ້ອງ.

3. ບັນດາພາຫະນະທີ່ມີເອກະສານຖືກຕ້ອງຄົບຖ້ວນແຕ່ຍັງບໍ່ທັນໄປຂຶ້ນທະບຽນຕິດປ້າຍ ໃຫ້ໄປຂຶ້ນທະບຽນນໍາພະແນກ ຍທຂ ແລ້ວໄປຕິດປ້າຍນໍາຈະລາຈອນແຂວງບໍ່ໃຫ້ກາຍ 15 ວັນ ພາຍຫຼັງທີ່ຊີ້ມາແລ້ວ.

4. ພາຫະນະທຸກປະເພດທີ່ແລ່ນຢູ່ບົນທ້ອງຖະໜົນຫຼວງ ຕ້ອງໄດ້ປະກອບເຕັກນິກໃຫ້ຄົບຖ້ວນຖືກຕ້ອງຕາມມາດຕະຖານຂອງໂຮງງານທີ່ໄດ້ຜະລິດອອກ.

- ຫ້າມນໍາເອົາພາຫະນະຂອງຕົນໄປດັດແປງສະພາບເຕັກນິກ ຫຼື ໃຊ້ອຸປະກອນເສີມແຕ່ງໂດຍບໍ່ໄດ້ຮັບອະນຸຍາດ.
- ຫ້າມບັນດາຜູ້ປະກອບການຫ້າງຮ້ານສ້ອມແປງໃຫ້ຄວາມຮ່ວມມືໃນການດັດແປງສະພາບເຕັກນິກ ຫຼື ໃສ່ອຸປະກອນເສີມແຕ່ງທີ່ຜິດຕໍ່ລະບຽບກົດໝາຍຢ່າງເດັດຂາດ.

5. ຫ້າມນໍາໃຊ້ລົດທີ່ບໍ່ມີເອກະສານລົດຟຸ່ມ, ລົດເຖື່ອນ ຫຼື ຕິດປ້າຍບໍ່ຖືກຕ້ອງ, ຕິດປ້າຍປອມເພື່ອນໍາໃຊ້ຢູ່ບົນທ້ອງຖະໜົນຫຼວງ ທີ່ຜິດຕໍ່ລະບຽບກົດໝາຍ.

6. ຫ້າມນໍາໃຊ້ພະຫານະທີ່ບໍ່ມີເອກະສານທີ່ຖືກຕ້ອງຄົບຖ້ວນເຂົ້າໃນການຂົນສົ່ງ ເພື່ອປະກອບດໍາເນີນທຸລະກິດ ຫຼື ເຄື່ອນໄຫວຢູ່ບົນທ້ອງຖະໜົນຫຼວງ.

7. ບັນດາຜູ້ຂັບຂີ່ລົດທຸກຊະນິດທີ່ແລ່ນສັນຈອນຢູ່ຕາມທ້ອງຖະໜົນຫຼວງຕ້ອງເອົາໃຈໃສ່ປະຕິບັດກົດລະບຽບການສັນຈອນຢ່າງເຂັ້ມງວດ.

8. ຜູ້ຂັບຂີ່ພາຫະນະທຸກປະເພດຕ້ອງໄດ້ຜ່ານການຝຶກອົບຮົມລະບຽບການສັນຈອນ ແລະ ຕ້ອງມີໃບອະນຸຍາດຂັບຂີ່ຕາມຂະໜາດລົດທີ່ຕົນຂັບຂີ່ຖືກຕ້ອງຕາມລະບຽບການ.

9. ຜູ້ຂັບຂີ່ລົດຈັກ ແລະ ຜູ້ຊ້ອນທ້າຍ ຕ້ອງໃສ່ໝວກກັນກະທົບທຸກຄັ້ງໃນເວລາຂັບຂີ່ ຂັບຂີ່ລົດໃຫຍ່ຕ້ອງໃສ່ສາຍຮັດນິລະໄພ.

10. ຫ້າມຂັບຂີ່ລົດໃຊ້ສຽງດັງ, ຂີ່ລົດເປັນພົງ, ເປັນແຜ, ຂີ່ລົດແຂ່ງກັນຕາມເສັ້ນທາງ ໂດຍບໍ່ໄດ້ຮັບອະນຸຍາດສ້າງສຽງລົບກວນລໍາຄານໃຫ້ແກ່ສັງຄົມ.

11. ຫ້າມຜູ້ຂັບຂີ່ຈອດລົດຊະຊາຍ, ຈອດລົດຢູ່ບ່ອນມີປ້າຍຫ້າມຈອດ, ຈອດລົດບ່ອນມີເຄື່ອງໝາຍຫ້າມຈອດ ຫຼື ຈອດລົດໃກ້ທາງ 3 ແຍກ 4 ແຍກທີ່ຜິດຕໍ່ລະບຽບ.

12. ບໍ່ອະນຸຍາດປຸກສ້າງ, ກໍ່ສ້າງ, ວາງເຄື່ອງຂາຍ ຫຼື ຈອດລົດຢູ່ເທິງຟຸດບາດ(ທາງຄົນຍ່າງ)ທີ່ເປັນການກີດຂວາງແກ່ການສັນຈອນ.

13. ລົດຂົນສົ່ງສິນຄ້າ, ຂົນສົ່ງໂດຍສານຕ້ອງປະຕິບັດລະບຽບກົດໝາຍວ່າດ້ວຍການຂົນສົ່ງທາງບົກຢ່າງເຂັ້ມງວດ ລົດໂດຍສານອະນຸຍາດຮັບເອົາຄົນໂດຍສານຕາມບ່ອນນັ່ງທີ່ອະນຸຍາດ, ສະເພາະລົດຂົນສົ່ງສິນຄ້າ, ລົດຂົນສົ່ງດິນ, ແຮ່ຊາຍຕ້ອງມີແນວຫຸ້ມຫໍ່, ມັດແໜ້ນເພື່ອຮັບປະກັນບໍ່ໃຫ້ວັດຖຸເຄື່ອງຂອງຕົກເຮ່ຍຊະຊາຍຕາມເສັ້ນທາງ. ເຊິ່ງເປັນການສ້າງຄວາມເປິເປື້ອນບໍ່ຈົບງາມເຮັດໃຫ້ການສັນຈອນພົບຄວາມຫຍຸ້ງຍາກສັບສົນ.

14. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງວາງສິ່ງຂອງ, ກອງວັດສະດຸກໍ່ສ້າງຢູ່ຕາມເສັ້ນທາງເພາະເປັນການກີດຂວາງການສັນຈອນ.

15. ຫ້າມສ້າງສິ່ງເປິເປື້ອນຕາມເສັ້ນທາງ, ທຳລາຍເສັ້ນທາງ, ທຳລາຍລະບົບປ້າຍສັນຍານຈາລະຈອນ ຫຼື ໃຊ້ວັດຖຸໃດໜຶ່ງໄປປິດບັງປ້າຍເຮັດໃຫ້ນັກຂັບຂີ່ບໍ່ສາມາດຫຼຽວເຫັນໄດ້.

16. **ມາດຕະການ:** ພາຍຫຼັງໄດ້ອອກຄຳສັ່ງໄປແລ້ວພາຍໃນ 30 ວັນຖ້າຜູ້ໃດຫາກລະເມີດລະບຽບຄຳສັ່ງດັ່ງກ່າວຈະໄດ້ກັກເຂົ້າມາທຳການສຶກສາອົບຮົມ ຫຼື ໄໝຕາມລະບຽບການ, ຖ້າຮ້າຍແຮງໄປກ່ວານັ້ນຈະໄດ້ທຳການສືບສວນ-ສອບສວນ ຫຼື ດຳເນີນຄະດີຕາມລະບຽບກົດໝາຍ.

17. ມອບໃຫ້ກອງບັນຊາການ ປກສ ແຂວງອັດຕະປື ພະແນກຖະແຫຼງຂ່າວວັດທະນະທຳ, ໂຄສະນາເຜີຍແຜ່ຢ່າງກ້ວາງຂວາງທົ່ວເຖິງ.

18. ຮຽກຮ້ອງມາຍັງຄະນະພັກ, ອຳນາດການປົກຄອງທຸກຂັ້ນ, ທຸກຂະແໜງການ. ຈົ່ງໃຫ້ຄວາມຮ່ວມມືປະຕິບັດຕາມຄຳສັ່ງສະບັບນີ້ດ້ວຍຄວາມຮັບຜິດຊອບສູງ, ໃຫ້ກາຍເປັນຂະບວນການກ້ວາງຂວາງເລິກເຊິ່ງຂອງທົ່ວປວງຊົນ.

**ດັ່ງນັ້ນ,** ຈຶ່ງແຈ້ງມາຍັງບັນດາຜູ້ທີ່ໃຊ້ລົດ, ໃຊ້ຖະໜົນຈົ່ງຮັບຮ້ອນຕື່ນຕົວປະຕິບັດຕາມການອອກຄຳສັ່ງ ດັ່ງກ່າວເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ເຈົ້າແຂວງ**

ແຂວງອັດຕະປື

ດຣ.ນາມ ວິຍະເກດ